| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດຂອງບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນປະເທດ |
| **ປະເພດເອກະສານ** | ໃບອະນຸຍາດດຳເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 09.01.2018 |
| **ພາກສ່ວນຮັບຜິດຊອບ** | ກົມການຄ້າພາຍໃນ<br>(021412436;) |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ຜູ້ທີ່ມີຈຸດປະສົງທີ່ຕ້ອງການຈະລົງທຶນ ຫຼື ດຳເນີນທຸລະກິດດ້ານບໍລິສັດຈຳໜ່າຍພາຍໃນ ຢູ່ ສປປ ລາວ |
| **ເງື່ອນໄຂໃນການຂໍເອກະສານ** | • ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດຈຳໜ່າຍພາຍໃນ• ໄດ້ລົງທຶນ ແລະ ຖອກທຶນຈົດທະບຽນ ຕາມທີ່ໄດ້ ກຳນົດໄວ້ໃນ ຂໍ້ 1.2 ມາດຕາ 7 ຂອງດຳລັດ ເລກທີ 331/ນຍ• ຖືບັນຊີຖືກຕ້ອງຕາມກົດໝາຍ• ມີບັນຊີເງິນຝາກຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍນ້ຳມັນເຊື້ອໄຟ ຕ້ອງຊຳລະຜ່ານທະນາຄານ• ມີສັນຍາຊື້-ຂາຍກັບບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ແລະ/ຫຼື ຜູ້ຜະລິດ ແລະ ປຸງແຕ່ງພາຍໃນ• ມີນ້ຳມັນເຊື້ອໄຟແຮສຳຮອງໄວ້ໃຊ້ໃນກໍລະນີສຸກເສີນ ໃຫ້ໄດ້ຢ່າງໜ້ອຍ ສິບ ວັນ ຕາມຕົວເລກສະເລ່ຍການ ສະໜອງປະຈຳວັນຂອງປີຜ່ານມາ ເພື່ອສະໜອງໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ແລະ ລູກຄ້າຂອງຕົນ• ສາມາດສະໜອງ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ຫ້າສິບລ້ານລິດ ຂຶ້ນໄປ ຕໍ່ປີ• ມີເຄື່ອງໝາຍຂອງບໍລິສັດຕົນ ຊຶ່ງໄດ້ຈົດທະບຽນເຄື່ອງໝາຍຖືກຕ້ອງຕາມກົດໝາຍ • ມີສາງເກັບນ້ຳມັນເຊື້ອໄຟເປັນຂອງຕົນເອງ ທີ່ຕິດເຄື່ອງໝາຍຂອງບໍລິສັດ, ສາມາດບັນຈຸນ້ຳມັນໄດ້ ໜຶ່ງລ້ານລິດ ຂຶ້ນໄປ• ມີພາຫະນະຂົນສົ່ງນ້ຳມັນເຊື້ອໄຟ ທີ່ເປັນຂອງບໍລິສັດ ຫຼື ໃນກຸ່ມບໍລິສັດ ຢ່າງໜ້ອຍ 10 ຄັນ; ພາຫະນະຂົນສົ່ງແຕ່ລະຄັນ ຕ້ອງໄດ້ມາດຕະຖານເຕັກນິກ, ຂຶ້ນທະບຽນ ແລະ ສອບທຽບ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ, ຕ້ອງມີເຄື່ອງໝາຍ ແລະ ສີ ທີ່ເປັນສັນຍາລັກຂອງບໍລິສັດຕົນ ຫຼື ຂອງບໍລິສັດນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟທີ່ຕົນເອງເປັນຕົວແທນ• ມີປ້ຳບໍລິສັດລົງທຶນເອງ ແລະ ປ້ຳຕົວແທນ ຕາມການກຳນົດຂອງອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ• ມີເຄື່ອງກວດກາຄຸນນະພາບ ແລະ ເຄື່ອງຊັ່ງຜອງນ້ຳມັນເຊື້ອໄຟ ທີ່ໄດ້ມາດຕະຖານ ຕາມການກຳນົດຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ• ມີພະນັກງານ ຢ່າງໜ້ອຍ ສອງຄົນ ທີ່ມີໃບຢັ້ງຢືນການ ຜ່ານການຝຶກອົບຮົມ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ອອກໃຫ້ໂດຍອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ• ມີປະກັນໄພ ຕາມກົດໝາຍວ່າດ້ວຍການປະກັນໄພ• ທຶນຈົດທະບຽນ: 50,000,000,000 ກີບຂຶ້ນໄປ, ໃນນີ້ຕ້ອງມີທຶນໝູນວຽນ 5,000,000,000 ກີບ ຂຶ້ນໄປ |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | |

| | | | |
|---|---|---|---|
| ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ | 331/ນຍ | 27.10.2017 | ພາກທີ II ກ<br>ການເຕືອນໄ<br>ການສ້າງຕັ້ງ<br>8) ໝວດທີ<br>ການເຕືອນໄ<br>(ມາດຕາ 19 |
| ຄຳແນະນຳກ່ຽວກັບການອອກອະນຸຍາດດຳເນີນທຸລະກິດໃນກິດຈະການອຸດສະຫະກຳ ແລະ ການຄ້າ | 0045/ອຄ.ກທຄວ | 18.01.2019 | |
| ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນບາງມາດຕາ ຂອງ ດຳລັດວ່າດ້ວຍ ທຸລະກິດນ້ຳ ມັນເຊື້ອໄຟ ເລກທີ 331/ນຍ ລົງວັນທີ 27.10.2017 | 0521/ອຄ.ກຄພນ | 02.05.2018 | |
| ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດ | 0023/ອຄ.ກທຄວ | 09.01.2019 | |
| ຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກິດຈະການອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງອອກໃບອະນຸຍາດດຳເນີນທຸລະກິດ | 0044/ອຄ.ກທຄວ | 18.01.2019 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | |
|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ |

| | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ (ວັນ)** | 30 | ໄລຍະເວລາຂອງການຄົ້ນຄວ້າພິຈາລະນາສໍານວນຄໍາຮ້ອງຂໍໃບອະນຸຍາດນີ້ ໄດ້ລະບຸໄວ້ຢ່າງຊັດເຈນຢູ່ໃນນິຕິກໍາ.ພາຍຫລັງໄດ້ຮັບເອກະສານຄົບຖ້ວນ, ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງປະສານສົມທົບກັບຂະແໜງການກ່ຽວຂ້ອງ ລົງກວດກາ ພາຍໃນ 5 ວັນລັດຖະການ ແລະ ຫາກຜ່ານການກວດກາ ລວມທັງເອກະສານຄົບຖ້ວນ ຖືກຕ້ອງ, ຕ້ອງອອກໃບຢັ້ງຢືນ ພາຍໃນ 30 ວັນລັດຖະການ |

| **ການຕໍ່ອາຍຸເອກະສານ** | |
|---|---|
| **ເອກະສານມີກໍານົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນໍາໃຊ້ຈັກເດືອນ?** |
| ມີ | 36 |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | ຕ້ອງຍື່ນຂໍຕໍ່ໃບອະນຸຍາດ ກ່ອນທີ່ໃບອະນຸຍາດຈະໝົດກໍານົດ 90 ວັນ ໂດຍຕ້ອງມີເງື່ອນໄຂດັ່ງນີ້:• ມີໃບອະນຸຍາດດໍາເນີນທຸລະກິດຂອງບໍລິສັດຈໍາໜ່າຍພາຍໃນ • ໄດ້ລົງທຶນ ແລະ ຖອກທຶນຈົດທະບຽນ ຕາມທີ່ໄດ້ ກໍານົດໄວ້ໃນ ຂໍ້ 1.2 ມາດຕາ 7 ຂອງດໍາລັດ ເລກທີ 331/ນຍ • ຖືບັນຊີຖືກຕ້ອງຕາມກົດໝາຍ • ມີບັນຊີເງິນຝາກຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍນໍ້າມັນເຊື້ອໄຟ ຕ້ອງຊໍາລະຜ່ານທະນາ ຄານ • ມີສັນຍາຊື້-ຂາຍກັບບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ແລະ/ຫຼື ຜູ້ຜະລິດ ແລະ ປຸງແຕ່ງພາຍໃນ • ມີນໍ້າມັນເຊື້ອໄຟແຮສໍາຮອງໄວ້ໃຊ້ໃນກໍລະນີສຸກເສີນ ໃຫ້ໄດ້ຢ່າງໜ້ອຍ ສິບ ວັນ ຕາມຕົວເລກສະເລ່ຍການ ສະໜອງປະຈໍາວັນຂອງປີຜ່ານມາ ເພື່ອສະໜອງໃຫ້ແກ່ປໍ້ານໍ້າມັນເຊື້ອໄຟ ແລະ ລູກຄ້າຂອງຕົນ • ສາມາດສະໜອງ ແລະ ຈໍາໜ່າຍນໍ້າມັນເຊື້ອໄຟ ຫ້າສິບລ້ານລິດ ຂຶ້ນໄປ ຕໍ່ປີ • ມີເຄື່ອງໝາຍຂອງບໍລິສັດຕົນ ຊຶ່ງໄດ້ຈົດທະບຽນເຄື່ອງໝາຍຖືກຕ້ອງຕາມກົດໝາຍ • ມີສາງເກັບນໍ້າມັນເຊື້ອໄຟເປັນຂອງຕົນເອງ ທີ່ຕິດເຄື່ອງໝາຍຂອງບໍລິສັດ, ສາມາດບັນຈຸນໍ້າມັນໄດ້ ໜຶ່ງລ້ານລິດ ຂຶ້ນໄປ • ມີພາຫະນະຂົນສົ່ງນໍ້າມັນເຊື້ອໄຟ ທີ່ເປັນຂອງບໍລິສັດ ຫຼື ໃນກຸ່ມບໍລິສັດ ຢ່າງໜ້ອຍ 10 ຄັນ; ພາຫະນະຂົນສົ່ງແຕ່ລະຄັນ ຕ້ອງໄດ້ມາດຕະຖານເຕັກນິກ, ຂຶ້ນທະບຽນ ແລະ ສອບທຽບ ຕາມການກໍານົດຂອງຂະ ແໜງການທີ່ກ່ຽວຂ້ອງ, ຕ້ອງມີເຄື່ອງໝາຍ ແລະ ສີ ທີ່ເປັນສັນຍາລັກຂອງບໍລິສັດຕົນ ຫຼື ຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟທີ່ຕົນເອງເປັນຕົວແທນ • ມີປໍ້າບໍລິສັດລົງທຶນເອງ ແລະ ປໍ້າຕົວແທນ ຕາມການກໍານົດຂອງອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ • ມີເຄື່ອງກວດກາຄຸນນະພາບ ແລະ ເຄື່ອງຊັ່ງຜອງນໍ້າມັນເຊື້ອໄຟ ທີ່ໄດ້ມາດຕະຖານ ຕາມການກໍານົດຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ • ມີພະນັກງານຢ່າງໜ້ອຍ ສອງຄົນ ທີ່ມີໃບຢັ້ງຢືນການ ຜ່ານການຝຶກອົບຮົມ ກ່ຽວກັບທຸລະກິດນໍ້າມັນເຊື້ອໄຟ ອອກໃຫ້ໂດຍອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ • ມີປະກັນໄພຕາມກົດໝາຍວ່າດ້ວຍການປະກັນໄພ |

| **ຄ່າທໍານຽມສໍາລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄໍາຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **Comments** | ປະຈຸບັນຍັງບໍ່ທັນໄດ້ເກັບ ແລະ ຍັງບໍ່ທັນໄດ້ກໍານົດໄວ້ໃນນິຕິກໍາໃດເທື່ອ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |

| | |
|---|---|
| **ຄຳ ເຫັນຄ່າ ທຳ ນຽມເພີ່ມເຕີມ** | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ປະຈຸບັນຍັງບໍ່ທັນໄດ້ເກັບ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳ ນຽມຕໍ່ອາຍຸເພີ່ມເຕີມ** | | | | |